**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 1607 /ກງ.

ນະຄອນຫຼວງວຽງຈັນ, ວັນທີ 29 MAY 2018

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຄັງສະສົມແຫ່ງລັດ

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບ ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ດຳລັດວ່າດ້ວຍຄັງສະສົມແຫ່ງລັດ ສະບັບ ເລກທີ 291/ລບ, ລົງວັນທີ 05 ພະຈິກ 2013;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 374/ຫສນຍ.ກລຂ, ລົງວັນທີ 15 ມີນາ 2018;
- ອີງຕາມ ບົດລາຍງານຂອງກົມສະສົມແຫ່ງລັດ ສະບັບ ເລກທີ 225/ກສລ, ລົງວັນທີ 21 ພຶດສະພາ 2018.

## ລັດຖະມົນຕີກະຊວງການເງິນ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ ນິຕິກຳ ແລະ ລະບຽບການວ່າດ້ວຍຄັງສະສົມແຫ່ງລັດ ຢ່າງເຂັ້ມງວດ ແລະ ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ; ກຳນົດຂອບເຂດສິດ. ຄວາມຮັບຜິດຊອບໃນການອະນຸມັດ ແລະ ຈັດຕັ້ງປະຕິບັດຄັງສະສົມແຫ່ງລັດໃຫ້ລະອຽດຈະແຈ້ງແນໃສ່ຮັບປະກັນການຈັດຕັ້ງປະຕິບັດໃຫ້ທັນເຫດການ, ປະຢັດ, ມີປະສິດທິຜົນ ແລະ ສາມາດກວດສອບໄດ້.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ມີການພົວພັນເຖິງການນຳໃຊ້ຄັງສະສົມແຫ່ງລັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1.** ສະພາບປົກກະຕິ ໝາຍເຖິງ ສະພາບການຊຶ່ງດຳເນີນໄປຕາມທຳມະດາ ທີ່ມີລັກສະນະເປັນປົກກະຕິ ໃນການເຄື່ອນໄຫວວຽກງານ ແລະ ການດຳລົງຊີວິດ ໃນສັງຄົມ ນອກຈາກເຫດການອື່ນໆ ທີ່ກຳນົດໄວ້ໃນເຫດການສຸກເສີນ.

2. ເຫດການສຸກເສີນ ໝາຍເຖິງ ໄພພິບັດທາງທຳມະຊາດ, ເຫດໂສກນາດຕະກຳ, ອັກຄີໄພ, ພະຍາດລະບາດທີ່ມີລັກສະນະເປັນວົງກ້ວາງ, ການກໍ່ການຮ້າຍ, ການຮຸກຮານ, ວິກິດການທາງດ້ານການເງິນ ແລະເຫດການອື່ນ ທີ່ມີຄວາມຈຳເປັນຕ້ອງແກ້ໄຂດ່ວນ;

3. ຜູ້ປະສົບໄພພິບັດ ໝາຍເຖິງ ບຸກຄົນ ຫຼື ຄອບຄົວ ທີ່ໄດ້ຮັບຜົນເສຍຫາຍຈາກ ເຫດການສຸກເສີນ ຫຼື ໄພພິບັດ ຊຶ່ງໄດ້ຮັບການຢັ້ງຢືນການປະເມີນຜົນເສຍຫາຍຢ່າງຄົບຖ້ວນ ແລະເປັນລາຍລັກອັກສອນ ຈາກອົງການປົກຄອງທ້ອງຖິ່ນ ແລະຄະນະກຳມະການທີ່ກ່ຽວຂ້ອງ;

4. ການດັດສົມຕະຫລາດ ໝາຍເຖິງ ການປະກອບສ່ວນ ໃນການຄຸ້ມຄອງ ແລະ ແຊກແຊງລາຄາ ໃນກໍລະນີເກີດວິກິດການທາງດ້ານການເງິນ ເພື່ອຄຸ້ມຄອງລາຄາສິນຄ້າຍຸດທະສາດບາງຊະນິດ ເປັນຕົ້ນ: ໝວດສິນຄ້າສະບຽງອາຫານ, ນ້ຳມັນເຊື້ອໄຟ ໃຫ້ຢູ່ໃນລະດັບທີ່ເສດຖະກິດຮັບໄດ້.

**ມາດຕາ 4 ເປົ້າໝາຍຮັບການຊ່ວຍເຫລືອຈາກຄັງສະສົມແຫ່ງລັດ**

ເປົ້າໝາຍ ທີ່ຈະໄດ້ຮັບການຊ່ວຍເຫລືອຈາກຄັງສະສົມແຫ່ງລັດ ມີດັ່ງນີ້:

1. ຜູ້ປະສົບໄພພິບັດ;
2. ການດັດສົມຕະຫລາດ;
3. ເປົ້າໝາຍອື່ນໆ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 5 ເງື່ອນໄຂການນຳໃຊ້ຄັງສະສົມແຫ່ງລັດ**

ການນຳໃຊ້ຄັງສະສົມແຫ່ງລັດ ແມ່ນສາມາດນຳໃຊ້ໄດ້ ທັງໃນ ສະພາບປົກກະຕິ ແລະ ໃນກໍລະນີ ມີເຫດການສຸກເສີນ.

1. ສະພາບປົກກະຕິ: ແມ່ນສາມາດນຳໃຊ້ຄັງສະສົມແຫ່ງລັດເປັນເງິນ ແລະ ເປັນວັດຖຸ, ສິນຄ້າສະສົມແຫ່ງລັດ ເພື່ອກະກຽມຄວາມພ້ອມຕອບສະໜອງຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ, ສຸກເສີນໃຫ້ແກ່ວຽກງານປ້ອງກັນ, ຕ້ານ ແລະ ຟື້ນຟູຜົນກະທົບຈາກໄພພິບັດ;

2. ເຫດການສຸກເສີນ: ແມ່ນສາມາດນຳໃຊ້ຄັງສະສົມແຫ່ງລັດເປັນເງິນ ແລະ ເປັນວັດຖຸ, ສິນຄ້າສະສົມແຫ່ງລັດ ເຂົ້າໃນການຊ່ວຍເຫຼືອ ແລະ ຟື້ນຟູ ຜົນກະທົບ ທີ່ເກີດຂຶ້ນຈາກເຫດການສຸກເສີນ ຫຼື ໄພພິບັດ ຢ່າງທັນເຫດການ ແລະ ການປະກອບສ່ວນດັດສົມຕະຫຼາດ ແນໃສ່ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ແລະ ຮັບປະກັນໃຫ້ເສດຖະກິດຂອງຊາດ ກັບຄືນສູ່ສະພາບປົກກະຕິໂດຍໄວ.

**ມາດຕາ 6 ການນຳໃຊ້ຄັງສະສົມແຫ່ງລັດ**

ການນຳໃຊ້ຄັງສະສົມແຫ່ງລັດ ປະຕິບັດ ດັ່ງນີ້:

1. ການນຳໃຊ້ຄັງສະສົມແຫ່ງລັດ ເປັນເງິນ ແລະ ເປັນວັດຖຸ, ສິນຄ້າສະສົມແຫ່ງລັດ ໃນກໍລະນີມີ ເຫດການສຸກເສີນ ຫຼື ໄພພິບັດເກີດຂຶ້ນ ຊຶ່ງມີມູນຄ່າການຊ່ວຍເຫຼືອເກີນ 10 ຕື້ກີບ, ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ, ບັນດາກະຊວງ, ອົງການລັດທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ສະເໜີທ່ານນາຍົກລັດຖະມົນຕີ ເພື່ອພິຈາລະນາ ແລະ ຕົກລົງ ນຳໃຊ້ເງິນສະສົມແຫ່ງລັດ, ລັດຖະມົນຕີກະຊວງການເງິນ ອອກຂໍ້ຕົກລົງ ເພື່ອຈັດຕັ້ງປະຕິບັດ ການເບີກຈ່າຍຕົວຈິງ ໂດຍອີງໃສ່ການຕົກລົງຂອງນາຍົກລັດຖະມົນຕີ ແລ້ວລາຍງານ ເພື່ອຂໍການຮັບຮອງຈາກສະພາແຫ່ງຊາດ.

2. ການນຳໃຊ້ຄັງສະສົມແຫ່ງລັດ ເປັນເງິນ ແລະ ເປັນວັດຖຸ, ສິນຄ້າສະສົມແຫ່ງລັດ ໃນກໍລະນີມີເຫດການສຸກເສີນ ຫຼື ໄພພິບັດເກີດຂຶ້ນ ຊຶ່ງມີມູນຄ່າການຊ່ວຍເຫຼືອ 10 ຕື້ກີບ ລົງມາ, ຄະນະກຳມະການຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຕ່ລະຂັ້ນ, ບັນດາກະຊວງ, ອົງການລັດທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ສະເໜີລັດຖະມົນຕີກະຊວງການເງິນ ພິຈາລະນາ ແລະ ຕົກລົງ ນຳໃຊ້ຄັງສະສົມແຫ່ງລັດ ແລ້ວລາຍງານຕໍ່ນາຍົກລັດຖະມົນຕີ ແລະ ສະພາແຫ່ງຊາດ.

**ມາດຕາ 7 ກົນໄກປະສານງານ ໃນການສະເໜີນຳໃຊ້ຄັງສະສົມແຫ່ງລັດ ໃນສະພາບປົກກະຕິ**

ກົນໄກປະສານງານ ໃນການສະເໜີນຳໃຊ້ຄັງສະສົມແຫ່ງລັດ ໃນສະພາບປົກກະຕິ ເພື່ອຟື້ນຟູ ແລະ ແກ້ໄຂຜົນກະທົບ ຈາກເຫດການສຸກເສີນ ຫຼື ໄພພິບັດ ປະຕິບັດ ດັ່ງນີ້

- ໃນກໍລະນີ ໄດ້ປະຕິບັດການຊ່ວຍເຫຼືອ ພາຍຫຼັງເກີດເຫດການສຸກເສີນ ຫຼື ໄພພິບັດແລ້ວ ແຕ່ກໍຍັງບໍ່ທັນສາມາດແກ້ໄຂ ແລະ ຟື້ນຟູຜົນກະທົບທີ່ເກີດຈາກເຫດການສຸກເສີນ ແລະ ໄພພິບັດ, ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ ເປັນເຈົ້າການປະສານສົມທົບ ກັບບັນດາກະຊວງ, ອົງການລັດທຽບເທົ່າ, ອົງການປົກຄອງ

ທ້ອງຖິ່ນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ບ່ອນທີ່ເກີດເຫດການສຸກເສີນ ຫຼື ໄພພິບັດ ເພື່ອສັງລວມຄວາມຕ້ອງການຊ່ວຍເຫຼືອຈາກຄັງສະສົມແຫ່ງລັດ ສະເໜີນາຍົກລັດຖະມົນຕີ ພິຈາລະນາ ແລະ ຕົກລົງນຳໃຊ້ຄັງສະສົມແຫ່ງລັດ.

- ບັນດາກະຊວງ, ອົງການລັດທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການໃນການປະຕິບັດຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນ ໃນການຕິດຕາມກວດກາ ແລະ ເກັບກຳຂໍ້ມູນຜົນເສຍຫາຍ ທີ່ເກີດຈາກເຫດການສຸກເສີນ ຫຼື ໄພພິບັດ ແລ້ວລາຍງານຕໍ່ ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ ເພື່ອສັງລວມລາຍງານຕໍ່ນາຍົກລັດຖະມົນຕີ.

## ມາດຕາ 8 ກົນໄກປະສານງານ ໃນການສະເໜີນຳໃຊ້ຄັງສະສົມແຫ່ງລັດ ໃນເຫດການສຸກເສີນ

ກົນໄກປະສານງານ ໃນການສະເໜີນຳໃຊ້ຄັງສະສົມແຫ່ງລັດ ໃນເວລາເກີດເຫດການສຸກເສີນ ເພື່ອແກ້ໄຂຜົນກະທົບ ຈາກເຫດການສຸກເສີນ ຫຼື ໄພພິບັດ ປະຕິບັດ ດັ່ງນີ້:

- ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບ ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຕ່ລະຂັ້ນ, ບັນດາກະຊວງ, ອົງການລັດທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອສັງລວມຄວາມຕ້ອງການຊ່ວຍເຫຼືອຈາກຄັງສະສົມແຫ່ງລັດ;

- ຄະນະກຳມະການປ້ອງກັນ ແລະຄວບຄຸມໄພພິບັດແຕ່ລະຂັ້ນ, ບັນດາກະຊວງ, ອົງການລັດທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການໃນການປະຕິບັດຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນໃນການສັງລວມຂໍ້ມູນຄວາມເສຍຫາຍ ທີ່ເກີດຈາກເຫດການສຸກເສີນ ຫຼື ໄພພິບັດ ແລ້ວລາຍງານໃຫ້ກະຊວງການເງິນ ເພື່ອສັງລວມລາຍງານຕໍ່ນາຍົກລັດຖະມົນຕີ ແລະ ສະພາແຫ່ງຊາດ.

## ມາດຕາ 9 ການປະກອບເອກະສານນຳໃຊ້ຄັງສະສົມແຫ່ງລັດ ໃນສະພາບປົກກະຕິ

ການປະກອບເອກະສານນຳໃຊ້ຄັງສະສົມແຫ່ງລັດ ໃນການກະກຽມ, ປ້ອງກັນ, ຕອບໂຕ້ ແລະ ຟື້ນຟູຜົນກະທົບຈາກໄພພິບັດ, ຊ່ວຍເຫຼືອ, ສົງເຄາະ ຜູ້ທີ່ຖືກຜົນກະທົບຈາກໄພພິບັດ ໃນສະພາບປົກກະຕິ ປະຕິບັດ ດັ່ງນີ້:

- ຂໍ້ຕົກລົງ ຫຼື ແຈ້ງການຂອງສະພາແຫ່ງຊາດ;
- ໜັງສືສະເໜີຈາກຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຕ່ລະຂັ້ນ ຫຼື ພາກສ່ວນທີ່ກ່ຽວຂ້ອງ;
- ເອກະສານສັງລວມຜົນເສຍຫາຍຕົວຈິງທີ່ໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ;
- ເອກະສານຕ່າງໆ ກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຕາມກົດໝາຍ ແລະ ລະບຽບການ.

## ມາດຕາ 10 ການປະກອບເອກະສານນຳໃຊ້ຄັງສະສົມແຫ່ງລັດ ໃນເຫດການສຸກເສີນ

ການປະກອບເອກະສານນຳໃຊ້ ຄັງສະສົມແຫ່ງລັດ ໃນການຕອບໂຕ້ ແລະ ຟື້ນຟູຜົນກະທົບຈາກໄພພິບັດ, ຊ່ວຍເຫຼືອຜູ້ທີ່ຖືກຜົນກະທົບຈາກໄພພິບັດ ໃນກໍລະນີມີເຫດການສຸກເສີນ ປະຕິບັດ ດັ່ງນີ້:

**1.** ກໍລະນີມູນຄ່າການຊ່ວຍເຫຼືອເກີນ 10 ຕື້ກີບ
- ຂໍ້ຕົກລົງ ຫຼື ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- ໜັງສືສະເໜີຈາກຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຕ່ລະຂັ້ນ ຫຼື ພາກສ່ວນທີ່ກ່ຽວຂ້ອງ;
- ເອກະສານຕ່າງໆ ກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຕາມກົດໝາຍ ແລະ ລະບຽບການ;
- ເອກະສານສັງລວມຜົນເສຍຫາຍຕົວຈິງທີ່ໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ;

**2.** ກໍລະນີມູນຄ່າການຊ່ວຍເຫຼືອ 10 ຕື້ກີບ ລົງມາ:
- ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ;
- ໜັງສືສະເໜີຈາກຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຕ່ລະຂັ້ນ ຫຼື ພາກສ່ວນທີ່ກ່ຽວຂ້ອງ;
- ເອະສານສັງລວມຜົນເສຍຫາຍຕົວຈິງທີ່ໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ;
- ເອກະສານຕ່າງໆ ກ່ຽວກັບການຈັດຊື້ຈັດ-ຈ້າງດ້ວຍທຶນຂອງລັດ ຕາມກົດໝາຍ ແລະ ລະບຽບການ;

**ມາດຕາ 11 ການຕິດຕາມ, ກວດກາ ແລະ ປະເມີນຜົນ.**

ກົມສະສົມແຫ່ງລັດ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຕິດຕາມ, ກວດກາ ແລະ ປະເມີນປະສິດທິຜົນ ຂອງການນຳໃຊ້ຄັງສະສົມແຫ່ງລັດ ໃຫ້ຖືກເປົ້າໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມສະສົມແຫ່ງລັດ ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ, ປະຢັດ ແລະ ມີປະສິດທິຜົນ.

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີກະຊວງການເງິນ**

ສົມດີ ດວງດີ